

# ວິທີໃຊ້ ການບໍລິການຂອງພວກເຮົາ

rtd-denver.com | 303.299.6000 | customercare@rtd-denver.com

RTD

ໃນຖານະເປັນຜູ້ໃຫ້ບໍລິການຂົນສົ່ງໂດຍສານສາທາລະນະ ສໍາລັບເຂດຕົວເມືອງ Denver, RTD ເຊື່ອມຕໍ່ຊຸມຊົນກັບລົດເມ, ລົດໄຟ, Access-a-Ride (ການບໍລິການສໍາລັບບຸກຄົນທີ່ມີຄວາມພິການ), ພາຫະນະຂົນສົ່ງໃນຄຸ້ມເຊັ່ນ: FlexRide ແລະ ອື່ນໆອີກ. ໃຫ້ RTD ຊ່ວຍຕອບສະໜອງ ຄວາມຕ້ອງການດ້ານການຂົນສົ່ງໂດຍສານຂອງທ່ານ!

## ໂຄງການປີ້ສ່ວນຫຼຸດ

ທ່ານ ແລະ ຄອບຄົວຂອງທ່ານອາດຈະມີຄຸນສົມບັດຮັບສ່ວນຫຼຸດ. ປີ້ສ່ວນຫຼຸດແມ່ນມີໃຫ້:

- **ບຸກຄົນທີ່ມີລາຍໄດ້ຕໍ່າ**
- **ຜູ້ອາວຸໂສ** (ອາຍຸ 65+)
- **ບຸກຄົນທີ່ມີຄວາມພິການ**
- **ຊາວໜຸ່ມ** (ອາຍຸ 19 ປີລົງໄປ)*

**ຮຽນຮູ້ເພີ່ມເຕີມກ່ຽວກັບການມີສິດ ແລະ ການສະໝັກຂໍປີ້ສ່ວນຫຼຸດໄດ້ທີ່ rtd-denver.com/discount-fares!**

* ຊາວໜຸ່ມທີ່ມີອາຍຸ 19 ປີລົງໄປ ສາມາດເດີນທາງໄດ້ໂດຍບໍ່ເສຍຄ່າ ຂອບໃຈໃຫ້ແກ່ໂຄງການປີ້ຟຣີສໍາລັບຊາວໜຸ່ມ (Zero Fare for Youth).

## ວິທີຊື້ປີ້ໂດຍສານ ແລະ ປີ້ຜ່ານ

ບໍ່ວ່າຈະເດີນທາງດ້ວຍລົດເມ ຫຼື ລົດໄຟ, ມັນງ່າຍທີ່ຈະຊື້ປີ້ໂດຍສານ ແລະ ປີ້ຜ່ານ RTD ຂອງທ່ານ.
ເລືອກປີ້ທີ່ຕອບສະໜອງຄວາມຕ້ອງການຂອງທ່ານ (3 ຊົ່ວໂມງ, ລາຍວັນ ຫຼື ລາຍເດືອນ) ແລະ ທ່ານກໍສາມາດເດີນທາງໄດ້.

### ບ່ອນຊື້ປີ້ໂດຍສານ ແລະ ປີ້ຜ່ານ

- ທີ່ເຄື່ອງຂາຍປີ້ຢູ່ສະຖານີລົດໄຟທຸກແຫ່ງ
- ທີ່ຜູ້ໃຫ້ບໍລິການລົດເມ (ຖ້າໃຊ້ເງິນສົດ, ໃຫ້ຈ່າຍຕາມຈໍານວນ)
- ທີ່ rtdonlinestore.com
- ທີ່ປ່ອງຂາຍ RTD
- ທີ່ຮ້ານຄ້າ King Soopers ແລະ Safeway ທີ່ເຂົ້າຮ່ວມໂຄງການ

### RTD ຢູ່ທີ່ໂທລະສັບສະມາດໂຟນຂອງທ່ານ

ບ່ອນທີ່ສາມາດຊື້ປີ້ໂດຍສານຂອງທ່ານໄດ້ງ່າຍທີ່ສຸດແມ່ນຢູ່ທີ່ໂທລະສັບສະມາດໂຟນຂອງທ່ານ. ສະແກນລະຫັດ QR ຢູ່ເບື້ອງຂວາເພື່ອດາວໂຫຼດແອັບ **RTD MyRide** ສໍາລັບ IOS ຫຼື Android.




**ສໍາຫຼວດເບິ່ງການບໍລິການ RTD, ວາງແຜນການເດີນທາງຂອງທ່ານ ແລະ ອື່ນໆອີກໄດ້ທີ່ rtd-denver.com.**

# ວາງແຜນການເດີນທາງຂອງທ່ານ

ໃຊ້ເຄື່ອງມື RTD **Next Ride** ([app.rtd-denver.com/nextride](app.rtd-denver.com/nextride)) ເພື່ອວາງແຜນການເດີນທາງຂອງທ່ານຈາກຕົ້ນຈົນຈົບ, ກວດຄວາມຄືບໜ້າ ຂອງລົດເມ ຫຼື ລົດໄຟຂອງທ່ານ ຫຼື ກວດເບິ່ງການຫຼ້າຊ້າ ຫຼື ການຍົກເລີກຕາມເວລາຈິງ.

# ຂີ່ລົດເມ

**ເຄັດລັບທີ່ມີປະໂຫຍດ**

- ໄປຮອດຈຸດຂຶ້ນລົດຂອງທ່ານໃຫ້ໄວ.
- ເມື່ອລົດເມໄປຮອດ, ໃຫ້ກວດເບິ່ງປ້າຍດິຈິຕອນຢູ່ດ້ານໜ້າທາງເທິງຂອງລົດເມ ເພື່ອກວດໃຫ້ແນ່ໃຈວ່າມັນແມ່ນເສັ້ນທາງ ແລະ ປາຍທາງທີ່ທ່ານຕ້ອງການ!
- ຂຶ້ນລົດເມແລ້ວຈ່າຍຄ່າປີ້ດ້ວຍເງິນຕາມຈຳນວນ, ປີ້ໂດຍສານທີ່ໃຊ້ໄດ້, ປີ້ຜ່ານ, ບັດ MyRide ຫຼື ປີ້ມືຖື.
- ຖ້າໃຊ້ບັດ MyRide ຫຼື ປີ້ມືຖື, ໃຫ້ສະແກນມັນດ້ວຍເຄື່ອງກວດສອບປີ້.
- ເມື່ອທ່ານໃກ້ຈະຮອດປາຍທາງຂອງທ່ານ, ໃຫ້ດຶງເຊືອກເຫຼືອງ ຫຼື ກົດປຸ່ມເພື່ອຂໍຢຸດລົດ.
- ອອກຜ່ານປະຕູຫຼັງເມື່ອເປັນໄປໄດ້.




# ຂຶ້ນລົດໄຟ

**ເຄັດລັບທີ່ມີປະໂຫຍດ**

- ໄປຮອດສະຖານີ. ກວດປີ້ດິຈິຕອນ ຫຼື Next Ride ສຳລັບລົດໄຟຂະບວນຕໍ່ໄປ.
- ຊື້ປີ້ໂດຍສານ ຫຼື ປີ້ຜ່ານທີ່ເຄື່ອງຂາຍປີ້ ຫຼື ກຽມປີ້ມືຖື ຫຼື ປີ້ຜ່ານຂອງທ່ານ ໃຫ້ພ້ອມກ່ອນທີ່ຈະຂຶ້ນ.
- ຢັ້ງຢືນປີ້ຂອງທ່ານໄດ້ທີ່ເຄື່ອງ "V" ສີແດງ, ບັດ MyRide ຂອງທ່ານທີ່ເຄື່ອງ ຢັ້ງຢືນປີ້ສີດຳ ແລະ ສີບອນເງິນ ຫຼື ເປີດນຳໃຊ້ປີ້ມືຖືຂອງທ່ານ. ທ່ານບໍ່ຈຳເປັນ ຕ້ອງຢັ້ງຢືນປີ້ທີ່ຊື້ຈາກເຄື່ອງຂາຍປີ້ໂດຍສານ.
- ຢືນຢູ່ຫຼັງເສັ້ນເຫຼືອງເພື່ອລໍຖ້າລົດໄຟ.
- ເບິ່ງປ້າຍດິຈິຕອນ ຫຼື ຟັງສຽງປະກາດເພື່ອໃຫ້ຮູ້ເມື່ອທ່ານໃກ້ຈະຮອດປາຍທາງຂອງທ່ານ.




# ໃຫ້ມີຄວາມປອດໄພຢູ່ເທິງລົດເມ ແລະ ລົດໄຟ




ຖ້າທ່ານເຫັນບາງຢ່າງ, ໃຫ້ເວົ້າອອກມາ. ສະແກນລະຫັດ QR ທີ່ເບື້ອງຊ້າຍເພື່ອດາວໂຫຼດແອັບ RTD **Transit Watch** ເພື່ອລາຍງານກ່ຽວກັບຄວາມກັງວົນດ້ານຄວາມປອດໄພ ແລະ ຄວາມ ສະຫງົບຢູ່ທີ່ ຫຼື ບໍລິເວນລະບົບ RTD. ທ່ານຍັງສາມາດໂທຫາ 303.299.2911 ຫຼື ສົ່ງຂໍ້ຄວາມຫາ 303.424.9100 ເພື່ອລາຍງານ ກ່ຽວກັບຄວາມກັງວົນດ້ານຄວາມສະຫງົບ. ໃຫ້ເຂົ້າເບິ່ງ [rtd-denver.com/transitwatch](rtd-denver.com/transitwatch) ເພື່ອຮຽນຮູ້ເພີ່ມເຕີມ.

# ການຊ່ວຍເຫຼືອ ແລະ ການຊ່ວຍເຫຼືອດ້ານພາສາ

ໃຫ້ໂທຫາຝ່າຍບໍລິການລູກຄ້າທີ່ **303.299.6000** ຖ້າທ່ານມີຄຳຖາມກ່ຽວກັບ RTD.

ບໍລິການລ່າມແປພາສາມີໃຫ້ໂດຍບໍ່ຄິດຄ່າໃນຫຼາຍກວ່າ 200 ພາສາ. ສຳລັບພາສາສະເປນ ໃຫ້ກົດ 2. ສຳລັບພາສາອື່ນໆ ໃຫ້ກົດ 8, ແລ້ວແຈ້ງຕົວແທນວ່າທ່ານເວົ້າພາສາຫຍັງ ແລະຖືສາຍໄວ້ໃນຂະນະທີ່ພວກເຂົາກຳລັງເຊື່ອມຕໍ່ທ່ານກັບລ່າມແປ.

**ສຳຫຼວດເບິ່ງການບໍລິການ RTD, ວາງແຜນການເດີນທາງຂອງທ່ານ ແລະ ອື່ນໆອີກໄດ້ທີ່ [rtd-denver.com](rtd-denver.com).**